**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 0041/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 19 ກໍລະກົດ 2019

# ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ແຈ້ງການກ່ຽວກັບການຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ.

- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມລະບຽບວ່າດ້ວຍ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ ຊາບທົ່ວເຖິງກັນວ່າ ມາຮອດປັດຈຸບັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກໃບຮັບຮອງໃຫ້ 06 ບໍລິສັດ ທີ່ສາມາດເຄື່ອນໄຫວໃຫ້ບໍລິການປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ດັ່ງມີລາຍຊື່ ລຸ່ມນີ້:

1. **ບໍລິສັດ ຊິມ ພອບເພີຕີ້ ຄອນເຊົາເທັ້ນ ຈຳກັດ** (Sime Property Consultants Co., Ltd);
2. **ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຈຳກັດ** (Grant Sherman Appraisal (Lao) Co., Ltd);
3. **ບໍລິສັດ ລາວປະເມີນຊັບສິນ ຈຳກັດ** (Lao Assets Appraisal Co., Ltd);
4. **ບໍລິສັດ ລາວ ສາກົນ ປະເມີນມູນຄ່າຊັບສິນ ຈຳກັດ** (Lao International Asset Appraisal co., Ltd);
5. **ບໍລິສັດ ເອເຊຍ ໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ** (Asia lotus Valuation co., Ltd);
6. **ບໍລິສັດ ລາວ ເຈີ້ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ** (Lao Zhengxin Asset Appraisal co., Ltd).

ແຈ້ງການສະບັບນີ້ ນຳໃຊ້ປ່ຽນແທນ ແຈ້ງການກ່ຽວກັບການຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ສະບັບເລກທີ 0003/ສຄຄຊ, ລົງວັນທີ 08 ມັງກອນ 2018.

ຖ້າຫາກວ່າໃນຕໍ່ໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີການອອກໃບອະນຸຍາດໃຫ້ບໍລິສັດອື່ນ ເຂົ້າມາເຄື່ອນໄຫວປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ແມ່ນຈະໄດ້ອອກແຈ້ງການເພີ່ມເຕີມ ເປັນແຕ່ລະກໍລະນີ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າສຳນັກງານ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ສຳນັກງານ

**ສາຍສະໝອນ ຈັນທະຈັກ**